**SIREN ວິທີປະຕິບັດ**

**STRATEGIC INFORMATION RESPONSE NETWORK**

**ອົງການ ສະຫະປະຊາຊາດ – ໂຄງການຕ້ານການຄ້າມະນຸດ (UNIAP): ໄລຍະ III**

**ບາງກອກ, ປະເທດໄທ**

21 ທັນວາ 2007 ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS)-02

# ການຄົ້ນຫາປັດໄຈສ່ຽງພື້ນຖານຕໍ່ການຄ້າມະນຸດ

*ໂດຍລວມ: ແມ່ນຫຍັງເຮັດໃຫ້ບຸກຄົນ ຫຼື ຊຸມຊົນໃດໜຶ່ງມີຄວາມສ່ຽງຕໍ່ການຄ້າມະນຸດ[1]? ຕາມການສົມມຸດຖານ ແບບລວມໆ, ຄວາມທຸກຍາກ ແລະ ການບໍ່ໄດ້ຮັບການສຶກສາ ແມ່ນປັດໄຈພື້ນຖານ, ແຕ່ວ່າ ຫຼັກຖານ ໄດ້ຊີ້ໃຫ້ເຫັນປັດໄຈອື່ນອີກທີ່ແຕກຕ່າງ. ຢູ່ສະຖານທີ່ຕ່າງກັນ, ປັດໄຈທີ່ເພີ່ມຄວາມສ່ຽງ ຕໍ່ການຄ້າມະນຸດ ກໍ່ຕ່າງກັນ. ການສ້າງກິດຈະກຳທີ່ອີງໃສ່ຫຼັກຖານເປັນພື້ນຖານ ແມ່ນຕ້ອງການຄວາມເຂົ້າໃຈ ກ່ຽວກັບປັດໄຈສ່ຽງຕ່າງໆ, ທີ່ຜ່ານການພິສູດ ດ້ວຍການສຶກສາຄົ້ນຄວ້າກັບບຸກຄົນ ແລະ ຊຸມຊົນທີ່ມີຄວາມສ່ຽງ, ເພື່ອວາງແຜນກິດຈະກຳ ຕ້ານການຄ້າມະນຸດ ແລະ ການເຄື່ອນຍ້າຍທີ່ມີຄວາມສ່ຽງ ທີ່ແທດເໝາະ ແລະ ໄດ້ຮັບໝາກຜົນ ທີ່ສາມາດຕີລາຄາໄດ້ໃນທາງບວກ.*

ໂຄງການປ້ອງກັນການຄ້າມະນຸດຫຼາຍໂຄງການ ສົມມຸດຖານວ່າ, ບໍ່ວ່າສະພາບຂອງທ້ອງຖິ່ນຈະເປັນແນວໃດ, ປັດໄຈຄວາມສ່ຽງຫຼັກ ແມ່ນຄວາມທຸກຍາກ ແລະ ການຂາດຄວາມຮູ້ກ່ຽວກັບການຄ້າມະນຸດ. ເຊິ່ງໝາຍຄວາມວ່າ, ກິດຈະກຳປ້ອງກັນ ການຄ້າມະນຸດ ແມ່ນດຳເນີນໄປຄຽງຄູ່ກັບໂຄງການລົບລ້າງຄວາມທຸກຍາກ ໂດຍນຳໃຊ້ການປູກຈິດສຳນຶກ, ໂດຍປັດສະຈາກການສຳຫຼວດ ຫຼື ການກວດສອບກ່ຽວກັບປັດໄຈສ່ຽງທີ່ແທ້ຈິງຂອງການຄ້າມະນຸດ ຢູ່ທ້ອງຖິ່ນດັ່ງກ່າວ ວ່າແມ່ນຍ້ອນລາຍໄດ້ ຫຼື ການຂາດຄວາມຮູ້ກ່ຽວກັບ ການຄ້າມະນຸດ ແລະ ການເຄື່ອນຍ້າຍທີ່ປອດໄພ ຫຼື ບໍ່. ມີການສຳຫຼວດທີ່ກວມຫຼາຍໆພາກຂອງອາຊີ (ແລະ ພາກພື້ນອື່ນໆອີກ) ທີ່ສະແດງໃຫ້ເຫັນວ່າ ຄວາມທຸກຍາກ, ລະດັບການສຶກສາຕໍ່າ ແລະ ການຂາດຄວາມຮູ້ກ່ຽວກັບການຄ້າມະນຸດ ບໍ່ແມ່ນປັດໄຈຕົ້ນຕໍຂອງຄວາມສ່ຽງ. ເພາະສະນັ້ນ, ພວກເຮົາຕ້ອງໃຊ້ຄວາມລະມັດລະວັງໃນການສົມມຸດຖານ ທີ່ອາດຈະນຳໄປສູ່ ການວາງເປົ້າໝາຍຂອງ ກິດຈະກຳ ທີ່ຜິດພາດ[2].

ໃນປະຈຸບັນ, ໝາກຜົນຂອງຫຼາຍໂຄງການທີ່ມີເປົ້າໝາຍໃນການປ້ອງກັນ ແລະ ລຸດຜ່ອນການຄ້າມະນຸດແມ່ນຕໍ່າ ແລະ/ຫຼື ມີຄວາມທ້າທາຍ ຕໍ່ການຕີລາຄາປະເມີນຜົນ, ໂດຍມີກໍລະນີຍົກເວັ້ນພຽງເລັກນ້ອຍ. ໃນຄວາມເປັນຈິງ, ຄວາມພະຍາຍາມ ໃນການຕີລາຄາຜົນໄດ້ຮັບຕົວຈິງ ຂອງກິດຈະກຳ ປ້ອງກັນການຄ້າມະນຸດ ແມ່ນມີໜ້ອຍ[3]. ເຊິ່ງ ມັນເຫັນໄດ້ຢ່າງຈະແຈ້ງຢູ່ບ່ອນວ່າ ກຸ່ມຄົນຈຳນວນຫຼາຍ ທີ່ຖືກສັນນິຖານວ່າມີຄວາມສ່ຽງ ແມ່ນໄດ້ຮັບການອົບຮົມ ກ່ຽວກັບຄວາມສ່ຽງຕໍ່ການຄ້າມະນຸດ, ແຕ່ວ່າ ກໍ່ຍັງມີຄົນ

---

[1] ຄວາມສ່ຽງຕໍ່ການຄ້າມະນຸດສາມາດຖືກຈິນຕະນາການຂຶ້ນໄດ້ຈາກສ່ວນປະກອບຂອງປັດໄຈພາຍນອກ ແລະ ພາຍໃນ. ປັດໄຈພາຍນອກ ອາດຈະປະກອບດ້ວຍຄອບຄົວ, ສັງຄົມ, ເສດຖະກິດ, ການປ່ຽນແປງ ດ້ານພຶດຕິກຳ ທີ່ບໍ່ດີ ຢູ່ພາຍໃນຄອບຄົວ ແລະ ຊຸມຊົນ, ໃນຂະນະທີ່ ປັດໄຈພາຍໃນ ແມ່ນຄວາມຄິດສ່ວນຕົວ ຂອງບຸກຄົນ ແລະ ແນວຄິດໃໝ່ທີ່ບາງທີອາດຈະພາຕົນເອງ ແລະ ຄອບຄົວ ຕົກຢູ່ພາວະສ່ຽງ ເພື່ອໃຫ້ໄດ້ຮັບ ການຍອມຮັບທາງດ້ານເສດຖະກິດ ແລະ/ຫຼື ສັງຄົມພາຍໃນໄລຍະເວລາໃດໜຶ່ງທີ່ແນ່ນອນ.

[2] ສຳລັບບາງຕົວຢ່າງ, ໃຫ້ອີງໃສ່ Regional Clearing Point (2005). *Second Annual Report on Victims of Trafficking in Southeastern Europe*; Mongolian Gender Equality Center (2006). *Human Trafficking in Mongolia: Risks, Vulnerability and Trauma*; and Rende Taylor, LM (2005). Dangerous trade-offs: The behavioral ecology of child labor and prostitution in rural northern Thailand. *Current Anthropology* 46.

[3] ໂຄງການຕ້ານການຄ້າ ແມ່ຍິງ ແລະ ເດັກນ້ອຍ ILO-IPEC (ILO-IPEC TICW) ແມ່ນກໍລະນີຍົກເວັ້ນຢູ່ໃນ ອາຊີ, ເຊິ່ງໄດ້ຈັດປະຕິບັດ ການປະເມີນ ຜົນກະທົບ ຢູ່ໃນ 5 ປະເທດລຸ່ມແມ່ນ້ຳຂອງໃນປີ 2006-2007.

ຈຳນວນນັບແສນ ຫຼື ບາງທີອາດຈະເປັນລ້ານ ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ໃນແຕ່ລະປີ. ປັດໄຈສ່ຽງ ໂດຍອີງໃສ່ສະພາບຂອງຫຼາຍທ້ອງຖິ່ນແມ່ນມີຄວາມສັບສົນຫຼາຍ ເຊິ່ງນອກເໜືອ ໄປຈາກຄວາມທຸກຍາກ ແລະ ການຂາດຄວາມຮູ້, ໂດຍມັນຈະສິ່ງຜົນກະທົບຢ່າງຈະແຈ້ງຕໍ່ປະສິດທິພາບ ຂອງກິດຈະກຳ ລົບລ້າງຄວາມທຸກຍາກ, ການສຶກສາຄົ້ນຄວ້າ, ການປູກຈິດສຳນຶກ, ທາງເລືອກໃນການດຳລົງຊີວິດ ແລະ ກິດຈະກຳກ່ຽວກັບການປ້ອງກັນ ອື່ນໆ.




UNIAP ນຳໃຊ້ການປະຕິບັດງານແບບມີຂັ້ນຕອນ ທີ່ມີລັກສະນະຮອບດ້ານ ແລະ ສາມາດປະເມີນຜົນໄດ້ເພື່ອປັບປຸງຄວາມເຂົ້າໃຈ ກ່ຽວກັບປັດໄຈສ່ຽງ. ການເຊື່ອມຕໍ່ **ການວິໄຈຄວາມສ່ຽງ** ເຂົ້າກັບກິດຈະກຳປ້ອງກັນການຄ້າມະນຸດ ທີ່ມີປະສິດທິພາບ ແບ່ງອອກເປັນສາມໄລຍະ, ດັ່ງສະແດງຢູ່ໃນແຜນວາດ (ຂວາມື). ການຄົ້ນຄວ້າທີ່ແບ່ງ ອອກເປັນສອງໄລຍະ ຈະຕິດຕາມດ້ວຍ ກິດຈະກຳທີ່ແທດເໝາະທີ່ອີງໃສ່ຜົນຂອງການຄົ້ນຄວ້າ. ເອກະສານສະບັບນີ້ ສະເໜີ **ພາບລວມ** ຂອງໄລຍະຂອງການວິໄຈຄວາມສ່ຽງ, ທີ່ປະກອບດ້ວຍອຸປະກອນ ແລະ ເອກະສານທີ່ມີຢູ່ຫຼາກຫຼາຍ.



*'ແມ່ນໃຜແດ່ທີ່ມີສຳມະຊິກໃນຄອບຄົວ ອອກຈາກບ້ານໄປຊອກ ເຮັດວຽກ?'*
– ໄລຍະທີ I ການທົດລອງ ຊອກກຸ່ມເປົ້າໝາຍຢູ່ ມຽນມ້າ, ໂດຍການຮ່ວມມື ຂອງ UNDP-UNIAP

**ໄລຍະທີ I** ແມ່ນຂັ້ນຕອນການວາງແຜນ ແລະ ການເລັງເປົ້າໝາຍ, ເຊິ່ງມີຈຸດປະສົງໃນການວິໄຈ ສະພາບແວດລ້ອມ, ເສດຖະກິດສັງຄົມ ແລະ ປັດໄຈສ່ວນບຸກຄົນ ທີ່ປະກອບເປັນຄວາມສ່ຽງຕໍ່ການຄ້າມະນຸດ. ສິ່ງດັ່ງກ່າວສາມາດຈັດຕັ້ງ ປະຕິບັດຜ່ານການສຳຫຼວດຢູ່ພາກສະໜາມ ແລະ ການວິໄຈຂໍ້ມູນສຳຮອງ.

**ໄລຍະທີ II** ແມ່ນການປະສານສົມທົບລະຫວ່າງ ການແບ່ງໜ່ວຍສົນທະນາຢູ່ໃນຊຸມຊົນ ແລະ ການສຳຫຼວດທ້ອງຖິ່ນທີ່ມີຄວາມສ່ຽງສູງ ເພື່ອພິສູດປັດໄຈຕົວຈິງ ທີ່ປະກອບເປັນຄວາມສ່ຽງ ແລະ ກຸ່ມຄົນທີ່ມີຄວາມສ່ຽງສູງ. ການແບ່ງໜ່ວຍສົນທະນາ ຢູ່ທ້ອງຖິ່ນເປົ້າໝາຍສາມາດ ຮີບໂຮມຄວາມຄິດເຫັນຂອງຊຸມຊົນກ່ຽວກັບປັດໄຈສ່ຽງ. ວິທີດັ່ງກ່າວແມ່ນວ່ອງໄວ ແລະ ງ່າຍດາຍພໍສົມຄວນ ເຊິ່ງໄດ້ໃຊ້ຕາຕະລາງວັດແທກຄວາມເຂົ້າໃຈ ເພື່ອກະຕຸກຊຸກຍູ້ ການສົນທະນາພາຍໃນໜ່ວຍ ແລະ ສົມທຽບຂໍ້ມູນທີ່ເກັບກຳໄດ້ຈາກແຕ່ລະໜ່ວຍ.

**ການແບ່ງໜ່ວຍສົນທະນາ** ແມ່ນການລິເລີ່ມ ການສົນທະນາແລກປ່ຽນ ແລະ ເກັບກຳຂໍ້ມູນຢູ່ຊຸມຊົນ ຢູ່ໃນທ້ອງຖິ່ນ ທີ່ຕ້ອງການຄວາມລະອຽດອ່ອນ ໃນການດຳເນີນການສຳຫຼວດ ດ້ານການຄ້າມະນຸດໂດຍກົງ. ເຖິງແມ່ນວ່າ ຈະປັດສະຈາກການໃຊ້ຄຳສັບ "ການຄ້າມະນຸດ" ການແບ່ງໜ່ວຍສົນທະນາກໍ່ສາມາດເປັນເວທີ ສຳລັບ ການສົນທະນາ ທີ່ເຮັດໃຫ້ ກຸ່ມຄົນໃນຊຸມຊົນຄົ້ນຄິດ ແລະ ສົນທະນາຖົກຖຽງນຳກັນວ່າ ດ້ວຍເຫດໃດການເຄື່ອນຍ້າຍຈຶ່ງບໍ່ປອດໄພ, ໄວໜຸ່ມ ແລະ ພໍ່ແມ່ຂອງເຂົ້າຈະຖືກຕົວະຍົວະຫຼອກລວງແນວໃດ, ໂອກາດທາງສັງຄົມ ແລະ ວຽກງານອັນໃດທີ່ດຶງດູດຄວາມສົນໃຈ, ຈະກວດສອບສິ່ງທີ່ ຖືກສະເໜີເກີນຄວາມຈິງໄດ້ແນວໃດ ແລະ ຊຸມຊົນຈະສາມາດວິໄຈ ສະຖານະການຂອງຕົນ ແລະ ມີບົດບາດໃນການສ້າງຊ່ອງທາງການແກ້ໄຂດ້ວຍຕົນເອງໄດ້ດ້ວຍວິທີໃດ.

ຂໍ້ມູນເກັບກຳໄດ້ຈາກການສຳຫຼວດ ດ້ວຍການແບ່ງໜ່ວຍສົນທະນາຈະຖືກ ນຳໃຊ້ເຂົ້າໃນການວິໄຈການປ່ຽນແປງ ທີ່ອາດຈະເກີດຂຶ້ນໃນ **ການສຳຫຼວດດ້ານປະລິມານຢູ່ທ້ອງຖິ່ນທີ່ມີປັດໄຈສ່ຽງສູງ.** ຄຽງຄູ່ກັບການເຮັດໜ້າທີ່ປູກຈິດສຳນຶກໄປໃນຕົວ, ເຊິ່ງຈຸດປະສົງເພື່ອລຸດຜ່ອນຄວາມສ່ຽງແລ້ວ, ການສຳຫຼວດດ້ານປະລິມານຢູ່ທ້ອງຖິ່ນ ທີ່ມີປັດໄຈສ່ຽງສູງ ຍັງເຈາະເລິກກ່ຽວກັບພຶດຕິກຳ ແລະ





*ພະນັກງານ UNIAP ປະຈຳ ມຽນມ້າ ຈັດຕັ້ງປະຕິບັດ ໄລຍະທີ II ການແບ່ງໜ່ວຍສົນທະນາ ເພື່ອວິໄຈຄວາມສ່ຽງ ຢູ່ ມຽນມ້າ (ຮູບດ້ານຊ້າຍ); ຮອຍຍິ້ມບົ່ງບອກເຖິງການປະກອບສ່ວນ ຢ່າງຕັ້ງໜ້າ ແລະ ເປີດເຜີຍ (ພວກເຮົາຫວັງເຊັ່ນນັ້ນ), ດັ່ງທີ່ໄດ້ຮຽນຮູ້ຈາກການແບ່ງໜ່ວຍສົນທະນາ ຢູ່ທີ່ ຄັນດານ, ກຳປູເຈຍ ຄັ້ງນີ້ (ຮູບດ້ານຂວາ).*

ການຕັດສິນໃຈຕົວຈິງທີ່ບາງທີບໍ່ປະກົດໃຫ້ເຫັນຢູ່ໃນການສົນທະນາ ແບບແບ່ງໜ່ວຍ (ເຊິ່ງປົກກະຕິຈະພົວພັນໃກ້ຊິດກັບແນວຄິດໂດຍທົ່ວໄປ ແລະ ຄວາມເຊື່ອຖືດ້ານວັດທະນະທຳ) ເພາະສະນັ້ນ, ການສຳຫຼວດດ້ານປະລິມານຢູ່ທ້ອງຖິ່ນທີ່ມີປັດໃຈສ່ຽງສູງ ບໍ່ໄດ້ຕີລາຄາ ສິ່ງທີ່ຊຸມຊົນເວົ້າວ່າ ແມ່ນຫຍັງກຳລັງເກີດຂຶ້ນ ແລະ ສິ່ງທີ່ຊຸມຊົນຄິດວ່າ ແມ່ນຫຍັງກຳລັງເກີດຂຶ້ນ ແຕ່ວ່າ ຈະຕີລາຄາ ສິ່ງທີ່ເກີດຂຶ້ນໃນຕົວຈິງ.

ການສຳຫຼວດທ້ອງຖິ່ນທີ່ມີຄວາມສ່ຽງສູງ ປະກອບດ້ວຍການສຳພາດ ແບບເຈາະຈີ້ມ ກຸ່ມຕົວຢ່າງ ຈາກກຸ່ມເປົ້າໝາຍ ຢູ່ທ້ອງຖິ່ນທີ່ມີຄວາມສ່ຽງສູງ, ໂດຍການແບ່ງອອກເປັນສອງກຸ່ມ: ກຸ່ມຄົນທີ່ເຄີຍຖືກຂູດຮີດ ແລະ ກຸ່ມຄົນທີ່ບໍ່ເຄີຍ ຖືກຂູດຮີດ. ຫຼັງຈາກນັ້ນ ການເກັບກຳຂໍ້ມູນຂອງແຕ່ລະບຸກຄົນໃນກຸ່ມຕົວຢ່າງ ຈະອີງໃສ່ການປ່ຽນແປງຂອງຫຼາຍໆ ຄອບຄົວ ແລະ ຊຸມຊົນ ທີ່ແຕກຕ່າງກັນ ໂດຍຜ່ານການສຳພາດແບບເຈາະຈີ້ມ ແລະ ຈະສົມທຽບຜົນໄດ້ຮັບ ຂອງທັງສອງກຸ່ມ ເພື່ອຄົ້ນຫາປັດໄຈຫຼັກ ທີ່ເຮັດໃຫ້ເຂົາເຈົ້າ ຖືກຂູດຮີດ ຫຼື ເຂົ້າໄປໃນວົງຈອນການຄ້າມະນຸດ.

**ໄລຍະທີ III** ແມ່ນຂັ້ນຕອນການອອກແບບ ແລະ ດັດແປງແກ້ໄຂ ກິດຈະກຳ ຂອງໂຄງການຕ້ານການຄ້າມະນຸດ ເຊິ່ງກ່ຽວຂ້ອງກັບສິ່ງທີ່ໄດ້ສຶກສາຄົ້ນຄວ້າໂດຍກົງຈາກຂັ້ນຕອນການສຳຫຼວດ ໄລຍະທີ I ແລະ II. ຕາຕະລາງຢູ່ທ້າຍເອກະສານໄດ້ສະເໜີ ບາງຕົວຢ່າງ ໂດຍລະອຽດກ່ຽວກັບປັດໄຈສ່ຽງທົ່ວໄປ ທີ່ສາມາດພົບເຫັນໃນຂອບເຂດກວ້າງ ໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ, ພ້ອມດ້ວຍຕົວຢ່າງ ຂອງກິດຈະກຳທີ່ໃຫຍ່ ທີ່ບາງທີອາດຈະປະສົບຜົນສຳເລັດຫຼາຍ ຫຼື ໜ້ອຍ ໃນການຫຼຸດຜ່ອນປັດໄຈສ່ຽງດັ່ງກ່າວ. ໃນການທົບທວນນຳໃຊ້ຕາຕະລາງ, ເຊິ່ງຢູ່ໃນຫຼາຍໆ ສະພາບແວດລ້ອມ ແມ່ນມີຄວາມສຳຄັນ ແລະ ຈຳເປັນຕ້ອງພິຈາລະນາວ່າ ປັດໄຈສ່ຽງໜຶ່ງ ອາດຈະເກີດຈາກການປະສົມປະສານ ຂອງຫຼາຍໆປັດໄຈສ່ຽງ - ແລະ ສິ່ງດັ່ງກ່າວຕ້ອງໄດ້ຮັບການພິຈາລະນາ ເຊັ່ນກັນ ເມື່ອມີການອອກແບບ ກິດຈະກຳທີ່ແທດເໝາະ.

ສະຫຼຸບລວມ, ຈຸດປະສົງລວມຂອງການວິໄຈຄວາມສ່ຽງ ແມ່ນເພື່ອເລັງເປົ້າໝາຍ ແລະ ຊອກຫາວິທີເຂົ້າຫາຊຸມຊົນ ທີ່ມີຄວາມສ່ຽງສູງ; ເພື່ອເຮັດໃຫ້ຊຸມຊົນຄົ້ນຄິດ ແລະ ສົນທະນາກ່ຽວກັບບັນຫາດັ່ງກ່າວ ຍ້ອນມັນມີຜົນກະທົບຕໍ່ພວກເຂົາເຈົ້າ ແລະ ເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມໃນການວິໄຈ ແລະ ສ້າງຊ່ອງທາງການແກ້ໄຂໃຫ້ແກ່ຊຸມຊົນຂອງເຂົາເຈົ້າ. ພ້ອມດຽວກັນນັ້ນ ມັນກໍ່ໄດ້ສ້າງຄວາມເຂົ້າໃຈກ່ຽວກັບປັດໄຈສ່ຽງທີ່ແທ້ຈິງ (ບໍ່ແມ່ນພຽງການສົມມຸດຖານ) ໃຫ້ແກ່ຊຸມຊົນ ແລະ ຜູ້ທີ່ເຮັດວຽກດ້ານພັດທະນາ ເພື່ອເຮັດໃຫ້ສາມາດຮ່ວມກັນ ວາງແຜນສ້າງກິດຈະກຳປ້ອງກັນ ການຄ້າມະນຸດ ແລະ ໂຄງການຫຼຸດຜ່ອນຄວາມສ່ຽງ ຢ່າງມີປະສິດທິພາບ.

| ***ພວກເຮົາຈະສາມາດຍົກໃຫ້ເຫັນບາງ ປັດໄຈສ່ຽງຕໍ່ການຄ້າມະນຸດທົ່ວໄປ ທີ່ພົບເຫັນຢູ່ໃນອະນຸພາກພື້ນ ລຸ່ມແມ່ນ້ຳຂອງ ຢ່າງມີປະສິດທິພາບໄດ້ດ້ວຍວິທີໃດ?*** | |
|---|---|
| **ຂໍ້ມູນຂອງ ປັດໄຈສ່ຽງ** | **ກິດຈະກຳທີ່ເໝາະສົມ** |
| ໄວໜຸ່ມຕ້ອງການອອກຈາກບ້ານເພື່ອຊອກຫາວຽກເຮັດງານທຳ ແລະ ການພະຈົນໄພ, ໂດຍບໍ່ມີສ່ວນກ່ຽວຂ້ອງກັບສະ ພາບ ເສດຖະກິດຄອບຄົວຂອງເຂົາເຈົ້າ | - ໂຄສະນາສົ່ງເສີມການເຄື່ອນຍ້າຍທີປອດໄພ ແລະ ມີການລາຍງານ ໃຫ້ແກ່ໄວໜຸ່ມທີ່ຈະເຄື່ອນຍ້າຍ<br>- ຝຶກອົບຮົມທັກສະການດຳລົງຊີວິດ ແລະ ໜ້າທີ່ວຽກງານ, ຖ້າສາມາດເຮັດໄດ້<br>- ໂຄສະນາສົ່ງເສີມ ແລະ ຊຸກຍູ້ ບໍລິສັດນາຍໜ້າ ແລະ ການຈັດຫາວຽກເຮັດງານທຳ ທີ່ປອດໄພ ແລະ ມີຄຸນນະພາບ |
| ການເຄື່ອນຍ້າຍເກີດຂຶ້ນກັບຊັ້ນຄົນ "ປານກາງ" ຫຼາຍກວ່າ ຊັ້ນຄົນທຸກຍາກ, ຍ້ອນພວກເຂົາເຈົ້າມີ ກຳລັງຊັບ ພຽງພໍ ສຳລັບ ການເດີນທາງ | |
| ການໄດ້ຮັບການສຶກສາສູງພໍສົມຄວນ ເຮັດໃຫ້ໄວໜຸ່ມທີ່ໄປຊອກວຽກເຮັດງານທຳ ຢູ່ຕົວເມືອງໃຫຍ່ມີຈຳນວນຫຼາຍຂຶ້ນ | |
| ຄວາມຈຳເປັນດ້ານການເງິນຢູ່ໃນຄອບຄົວ, ເຊັ່ນ ການ ເຈັບເປັນຂອງພໍ່ແມ່, ເຮັດໃຫ້ລູກຕ້ອງຫາເງິນມາໃຊ້ຈ່າຍ ໃນການປິ່ນປົວ, ສຸດທ້າຍກໍ່ຈະມີໜີ້ສິນ | - ມີເງິນກູ້ຢືມສຳລັບການປິ່ນປົວ ແລະ ກໍລະນີສຸກເສີນ ທີ່ມີດອກເບ້ຍຕ່ຳໃຫ້ແກ່ຊາວບ້ານ<br>- ສົ່ງເສີມ ແລະ ສະໜັບສະໜູນ ນະໂຍບາຍໃນການປັບປຸງການບໍລິການດ້ານສະຫວັດດີການ |
| ການຫຼຸດໜ້ອຍລົງ ຂອງປາ ໃນບາງເຂດຫາປາແບບດັ້ງເດີມ ເຮັດໃຫ້ຜູ້ຊາຍທີ່ມີອາຊີບຊາວປະມົງ ແບບດັ້ງເດີມ ຂາດລາຍໄດ້ເພື່ອລ້ຽງຊີບ | - ການສະໜັບສະໜູນ ການດຳລົງຊີວິດແບບອື່ນ<br>- ໂຄງການສິ່ງແວດລ້ອມ ຫຼື ການປູກຝັງ ທີ່ສາມາດເຮັດໄດ້<br>- ໂຄສະນາສົ່ງເສີມການເຄື່ອນຍ້າຍທີປອດໄພ, ມີການລາຍງານ ໃຫ້ແກ່ເດັກນ້ອຍ/ຜູ້ຊາຍທີ່ເຄື່ອນຍ້າຍ |
| ໄພທຳມະຊາດຕາມລະດູການຢູ່ບາງທ້ອງຖິ່ນ ເຮັດໃຫ້ການດຳລົງຊີວິດຢູ່ທ້ອງຖິ່ນດັ່ງກ່າວມີຄວາມລຳບາກ | - ໂຄງການສິ່ງແວດລ້ອມ ຫຼື ການປູກຝັງ<br>- ການສະໜັບສະໜູນ ການດຳລົງຊີວິດແບບອື່ນ<br>- ໂຄສະນາສົ່ງເສີມການເຄື່ອນຍ້າຍທີປອດໄພ ແລະ ມີການ ລາຍງານ ໃຫ້ແກ່ຜູ້ທີ່ເຄື່ອນຍ້າຍ |

**ຫຼັກການ ຂອງ UNIAP / SIREN ທີ່ນຳໃຊ້ສຳລັບການວິໄຈຄວາມສ່ຽງ**

- ການປະເມີນຄຸນນະພາບ ຂອງຄວາມຮູ້ ແລະ ແນວຄິດ ຢູ່ສະຖານທີ່ວິໄຈ
- ການສຳຫຼວດດ້ານປະລິມານຢູ່ທ້ອງຖິ່ນທີ່ມີຄວາມສ່ຽງສູງ, ສຳລັບສະຖານທີ່ຕົ້ນທາງ ແລະ ປາຍທາງ
- ການສຳຫຼວດຜູ້ຖືກເຄາະຮ້າຍ ໂດຍການຄົ້ນຫາເສັ້ນທາງ ແລະ ໃຊ້ແຜນທີ່ຂໍ້ມູນ
- ການເລືອກການທົດລອງ ເພື່ອຍອມຮັບຄວາມສ່ຽງ ແລະ ຄວາມປາດຖະໜາ ກ່ຽວກັບຄວາມສ່ຽງ

**ວິທີປະຕິບັດທີ່ເລືອກເຟັ້ນອື່ນໆ ຂອງ UNIAP / SIREN**

- ການບັນທຶກ ການເປັນໜີ້ສິນ
- ຫຼັກການ ສຳພາດ ຜູ້ຄ້າມະນຸດ ທີ່ຖືກດຳເນີນຄະດີ
- ສ້າງແຜນທີ່ຕິດຕາມການເຄື່ອນໄຫວ ຂອງນາຍໜ້າ/ຜູ້ຄ້າມະນຸດ
- ການຕີລາຄາ: ກິດຈະກຳສ້າງຄວາມສາມາດ ດ້ານການ ຕ້ານການຄ້າມະນຸດ
- ການຕີລາຄາ: ການປະເມີນຜົນກະທົບລວມ


**SIREN ແມ່ນແນວຄິດໃໝ່ ທີ່ສະໜັບສະໜູນໂດຍ:**

**ອົງການສະຫະປະຊາຊາດ – ຫ້ອງການບໍລິຫານໂຄງການຕ້ານການຄ້າມະນຸດ**

**(UNIAP/PMO)**

**ອາຄານ ສະຫະປະຊາຊາດ, ຊັ້ນ 7, ລອກ B**

**ຖະໜົນ ຣາຊະດຳເນີນນອກ, ບາງກອກ 10200, ປະເທດໄທ**

**www.no-trafficking.org**